# ວັກຊິນ
# ນິວຄາເຊີນອາຍຸອ່ອນ

## ນິຍາມ:

ວັກຊິນຊະນິດນີ້ ປຸງແຕ່ງຈາກເຊື້ອໄວຣັສ ນິວຄາເຊີນ ແອຟ (Ƒ) ປູກໃສ່ໄຂ່ລູກອາຍຸປະມານ 8 ມື້. ຫລັງຈາກນັ້ນ ເກັບເອົານ້ຳຫລໍ່ລ້ຽງໄຂ່ລູກມາປະສົມກັບນົມຝຸ່ນແຍກໄຂມັນ ບັນຈຸແກ້ວແລ້ວເອົາເຂົ້າຈັກດູດແຫ້ງດ້ວຍຄວາມເຢັນໃນລະບົບສູນອາກາດ. ແມ່ນວັກຊິນເຊື້ອເປັນຊະນິດຝຸ່ນ (ເຊື້ອຍັງມີຊີວິດ).




## ລັກສະນະອາການ

ໄກ່ນ້ອຍມີອາການເຫົງາ, ບໍ່ກິນອາຫານ ຂົນຫຍິ່ງມັກຈຸ້ມກັນເປັນໝູ່ ຫາຍໃຈຍາກ ເພາະມີນ້ຳມູກ, ນ້ຳລາຍອັ່ງຕາມປາກ ແລະ ລຳຄໍ ຍືດຄໍຂຶ້ນເພື່ອໃຫ້ຫາຍໃຈສະດວກ, ອາຈົມທຳອິດເປັນກ້ອນ ຕໍ່ມາເປັນນ້ຳສີຂາວປົນສີມົ່ນ ຕາມຫາງຈະມັກມີອາຈົມ ຕິດໄລຍະ 2 — 3 ມື້ ຕໍ່ມາ ໄກ່ຈະຕາຍ. ເປີເຊັນຕາຍ ມີຮອດ 100 %.

## ຂໍ້ແນະນຳ:

ໃຊ້ປ້ອງກັນພະຍາດ ນິວຄາເຊີນ, ຢອດໃຫ້ໄກ່ນ້ອຍທົ່ວໄປ ອາຍຸ 0 — 7 ມື້.

ຕາມທຳມະດາວັກຊິນຊະນິດນີ້ ບໍ່ເປັນອັນຕະລາຍແກ່ໄກ່ນ້ອຍ ແຕ່ບາງຄັ້ງຄາວອາດຈະມີປະກົດການດ້ານການຫາຍໃຈພາຍໃນ 4 — 5 ວັນ ແລ້ວກໍ່ຈະກັບຄືນສູ່ສະພາບປົກກະຕິ ຊຶ່ງເປັນປະກົດການທຳມະດາ.

## ວິທີໃຊ້:

ແກ້ວບັນຈຸ 100 ເຂັມ ປະສົມນ້ຳກັ່ນ 10 ມລ. ສັ່ນໃຫ້ລະລາຍດີກ່ອນໃຊ້.

- ຢອດດັງ ແລະ ຕາເບື້ອງລະຢອດ (2 — 4 ຢອດ) ເວລາຢອດດັງຕ້ອງອັດດັງຂ້າງໜຶ່ງ ແລະ ປາກ ເພື່ອໃຫ້ນ້ຳຢາເຂົ້າໄປໃນດັງທັງໝົດ. ພາຍຫລັງປະສົມນ້ຳຢາແລ້ວຄວນໃຊ້ໃຫ້ໝົດ ພາຍໃນໄລຍະ 2 ຊົ່ວໂມງ.

ຫ້າມໃຊ້ຢານີ້ໃນຝູງໄກ່ ທີ່ກຳລັງເປັນພະຍາດ ທາງລົມຫາຍໃຈ. ບໍ່ຄວນໃຊ້ເຫລົ້າ ຫລື ຢາຂ້າເຊື້ອອື່ນໆເຊັດຕາມບໍລິເວນຢອດຢາ, ກ່ອນ ຫລື ຫລັງຢອດ.






ຢອດດັງ ຫລືຕາ ໄກ່ນ້ອຍ ເບື້ອງລະຢອດ

## ໄລຍະຄຸ້ມກັນ:

ໄກ່ນ້ອຍຈະຄຸ້ມກັນ ພະຍາດນິວຄາເຊີນໄດ້ຮອດອາຍຸ 15 ອາທິດ. ແຕ່ວ່າເພື່ອຮັບປະກັນ, ຫລັງຈາກອາຍຸໄກ່ນີ້ໄດ້ 6 — 8 ອາທິດແລ້ວ ຈະຕ້ອງສັກຢາ ນິວຄາເຊີນອາຍຸໄກ່ຕື່ມອີກ.

## ການເກັບຮັກສາ:

- ຮັກສາໃນອຸນນະພູມ 4 ອົງສາ ກຸ້ມໄດ້ 3 ເດືອນ, ໃນອຸນນະພູມ ( — 30 ອົງສາ ກຸ້ມໄດ້ 1 ປີ )
- ເວລາຂົນຍ້າຍວັກຊິນ ຄວນຮັກສາໄຫ້ຢູ່ໃນຄວາມເຢັນ ແລະບໍ່ໃຫ້ຖືກແສງແດດ.

**ແກ້ວບັນຈຸ:** ແກ້ວໜຶ່ງບັນຈຸ 100 ເຂັມ.

ຕາຕະລາງ : ການນຳໃຊ້ຢາວັກຊີນ ນິວຄາເຊີນ ອາຍຸອ່ອນ

| ຊະນິດຢາວັກຊີນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| • ຢາວັກຊີນ ນິວຄາເຊີນ ອາຍຸອ່ອນ | • ໃຊ້ກັບໄກ່ນ້ອຍ ອາຍຸ 0—7 ມື້. | • ແກ້ວບັນຈຸ100 ເຂັມປະສົມນ້ຳກັ່ນ 10 ມລ. <br>• ຢອດດັງ ແລະ ຕາ ເບື້ອງລະ 2—4 ຢອດ). | 3 ເດືອນ |

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການນຳໃຊ້ຢາວັກຊີນ ນິວຄາເຊີນອາຍຸອ່ອນ





ຄັດຈາກ: ປື້ມຄູ່ມືການນຳໃຊ້ວັກຊີນສຳລັບສັດ (1997)

ຮຽບຮຽງໂດຍ :
ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)

ສະໜັບສະໜູນໂດຍ :
ໂຄງການ ສົ່ງເສີມ ກະສິກຳ (LEAP)